ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 25 /ລບ

ນະຄອນຫລວງວຽງຈັນ, ວັນທີ 16.01.2017.

# ດຳລັດ
## ວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2097/ອຄ, ລົງວັນທີ 18 ພະຈິກ 2016.

## ລັດຖະບານ ອອກດຳລັດ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍມາດຕາ 2 ຂອງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ກ່ຽວກັບການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຊັດເຈນ ແລະ ແທດເໝາະກັບສະພາບເສດຖະກິດຂອງ ສປປ ລາວ ໃນແຕ່ລະໄລຍະ ແນໃສ່ປະຕິບັດນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຖືກເປົ້າໝາຍ ປະກອບສ່ວນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຂັ້ມແຂງ.

**ມາດຕາ 2 ການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນອີງໃສ່ຈຳນວນແຮງງານສະເລ່ຍໃນປີຫຼືມູນຄ່າຊັບສິນທັງໝົດ ຫຼື ລວມຍອດລາຍຮັບທຸລະກິດປະຈຳປີຂອງວິສາຫະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ໂດຍອີງຕາມຂະແໜງວິສາຫະກິດທີ່ດຳເນີນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ.

**ມາດຕາ 3 ຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈັດແບ່ງອອກເປັນ 3 ຂະໜາດ ດັ່ງນີ້:

1. ຈຸນລະວິສາຫະກິດ;
2. ວິສາຫະກິດຂະໜາດນ້ອຍ;
3. ວິສາຫະກິດຂະໜາດກາງ.

**ມາດຕາ 4 ຈຸລະວິສາຫະກິດ**

ຈຸລະວິສາຫະກິດແມ່ນວິສາຫະກິດຂະໜາດນ້ອຍສຸດ ທີ່ມີເງື່ອນໄຂໃດໜຶ່ງດັ່ງນີ້:

| ຂະແໜງວິສາຫະກິດ | ແຮງງານສະເລ່ຍໃນປີ | ມູນຄ່າຊັບສິນທັງໝົດ(ກີບ) | ຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 1-5 ຄົນ | ບໍ່ເກີນ 100.000.000 | ບໍ່ເກີນ 400.000.000 |
| ການຄ້າ | 1-5 ຄົນ | ບໍ່ເກີນ 150.000.000 | ບໍ່ເກີນ 400.000.000 |
| ການບໍລິການ | 1-5 ຄົນ | ບໍ່ເກີນ 200.000.000 | ບໍ່ເກີນ 400.000.000 |

**ມາດຕາ 5 ວິສາຫະກິດຂະໜາດນ້ອຍ**

ວິສາຫະກິດຂະໜາດນ້ອຍທີ່ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

| ຂະແໜງວິສາຫະກິດ | ແຮງງານສະເລ່ຍໃນປີ | ມູນຄ່າຊັບສິນທັງໝົດ(ກີບ) | ຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 6-50 ຄົນ | ບໍ່ເກີນ 1.000.000.000 | ບໍ່ເກີນ 2.000.000.000 |
| ການຄ້າ | 6-50 ຄົນ | ບໍ່ເກີນ 1.000.000.000 | ບໍ່ເກີນ 3.000.000.000 |
| ການບໍລິການ | 6-50 ຄົນ | ບໍ່ເກີນ 1.500.000.000 | ບໍ່ເກີນ 1.500.000.000 |

**ມາດຕາ 6 ວິສາຫະກິດຂະໜາດກາງ**

ວິສາຫະກິດຂະໜາດກາງ ທີ່ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

| ຂະແໜງວິສາຫະກິດ | ແຮງງານສະເລ່ຍໃນປີ | ມູນຄ່າຊັບສິນທັງໝົດ(ກີບ) | ຍອດລາຍຮັບທຸລະກິດ ປະຈຳປີ (ກີບ) |
|---|---|---|---|
| ການຜະລິດສິນຄ້າ | 51-99 ຄົນ | ບໍ່ເກີນ 4.000.000.000 | ບໍ່ເກີນ 4.000.000.000 |
| ການຄ້າ | 51-99 ຄົນ | ບໍ່ເກີນ 4.000.000.000 | ບໍ່ເກີນ 6.000.000.000 |
| ການບໍລິການ | 51-99 ຄົນ | ບໍ່ເກີນ 6.000.000.000 | ບໍ່ເກີນ 4.000.000.000 |

**ມາດຕາ 7 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 8 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫລັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ